# ຄູ່ມືໃນການເຊົ່າເຮືອນສຳລັບຄົນຕ່າງດ້າວ
# ເວລາເຊົ່າເຮືອນແລ້ວຕ້ອງໄດ້ລະວັງຫຍັງແດ່

ປຶ້ມຄູ່ມືນີ້ຈະອະທິບາຍກ່ຽວກັບສິ່ງຕ່າງໆທີ່ຄວນຮູ້ແລະຄວນລະວັງເວລາເຊົ່າເຮືອນ

- ສິ່ງທີ່ຕ້ອງເຮັດຫຼັງຈາກເຊົ່າເຮືອນ
- ກົດລະບຽບແລະມາລະຍາດໃນເວລາເຊົ່າເຮືອນ
- ສິ່ງທີ່ຕ້ອງເຮັດເວລາຈະຍ້າຍອອກຈາກເຮືອນທີ່ເຊົ່າຢູ່

## ສູນຊ່ວຍເຫຼືອຄົນຕ່າງດ້າວໃນການເຊົ່າເຮືອນຢູ່ຄານາງະວະ

NPOພິເສດສູນຊ່ວຍເຫຼືອຄົນຕ່າງດ້າວໃນການເຊົ່າເຮືອນຢູ່ຄານາງະວະແມ່ນສູນທີ່ຊ່ວຍເຫຼືອຄົນທີ່ມີພາສາແມ່ບໍ່ແມ່ນພາສາຍີ່ປຸ່ນໃນການຊອກຫາເຮືອນຢູ່. ນອກນັ້ນທາງສູນຍັງໃຫ້ຄຳປຶກສາໃນການແກ້ໄຂບັນຫາຕ່າງໆໃນການເຊົ່າເຮືອນນຳອີກ.

ສູນ YMCA ໂຢໂກຮາມາ

ລົດໄຟໃຕ້ດິນໂຢໂກຮາມາ ສະຖານີ ຄັນໃນ

ລົດໄຟສາຍJR ສະຖານີ ຄັນໃນ




ສະໜາມກິລາ ໂຢໂກຮາມາ

ຫ້ອງວ່າການເມືອງ ໂຢໂກຮາມາ

1-7ໂທະຄິວະໂຈ ເຂດນາກະຄຸ ເມືອງໂຢໂກຮາມາ ສູນYMCAໂຢໂກຮາມາ ຊັ້ນ 2

ຕໍ່ໜ້າສະໜາມກິລາໂຢໂກຮາມາ
ຍ່າງ 5 ນາທີ ຈາກລົດໄຟໃຕ້ດິນໂຢໂກຮາມາ ຫຼື JR ສະຖານີຄັນໃນ
ຍ່າງ 5 ນາທີ ຈາກສະຖານີລົດໄຟ ນິຮົງໂອໂດຣິ ຂອງສາຍມິນາໂຕະມິໄຣ
ໂທລະສັບ : 045-228-1752 ແຟັກ : 045-228-1768
e-mail : sumai.sc@sumasen.com
http://www.sumasen.com/

ພິມເດືອນ 2 ປີ 2013

# I ສິ່ງທີ່ຕ້ອງເຮັດຫຼັງຈາກເຊົ່າເຮືອນໄດ້ແລ້ວ

## 1 ກວດກາພາຍໃນຫ້ອງ

1) ທ່ານຈະໄດ້ຮັບກະແຈຫ້ອງຫຼັງຈາກເຮັດສັນຍາເຊົ່າຮຽບຮ້ອຍແລ້ວ. ກະແຈນີ້ຕ້ອງໄດ້ສົ່ງຄືນເວລາຈະຍ້າຍອອກ ສະນັ້ນຈົ່ງເກັບຮັກສາກະແຈໄວ້ໃຫ້ດີ.

2) ການກວດກາ

A ກວດເບິ່ງປະຕູ, ປ່ອງຢ້ຽມວ່າປິດເປີດໄດ້ດີບໍ່.

B ກວດເບິ່ງກະແຈວ່າລັອກໄດ້ດີບໍ່.

C ກວດເບິ່ງພື້ນແລະຝາວ່າມີຮອຍເປື້ອນຫຼືຮອຍຂູດຂີດບໍ່.

*ຖ້າມີບັນຫາໃຫ້ຕິດຕໍ່ຫາບໍລິສັດອະສັງຫາລິມະຊັບເພື່ອໄປກວດກາເບິ່ງພ້ອມກັນກັບເຈົ້າຂອງເຮືອນ.

## 2 ລົງທະບຽນນຳໃຊ້ໄຟຟ້າ

1) ກ່ອນຈະນຳໃຊ້ໄຟຟ້າໄດ້ ຕ້ອງຕິດຕໍ່ລົງທະບຽນນຳບໍລິສັດໄຟຟ້າໂຕກຽວເສຍກ່ອນ. ຈົ່ງຖາມບໍລິສັດອະສັງຫາລິມະຊັບວ່າເຂົາເຈົ້າໄດ້ຕິດຕໍ່ໄປທາງໄຟຟ້າໃຫ້ແລ້ວບໍ່.

2) ຫາກທ່ານຈະຕິດຕໍ່ເອງ ກໍໃຫ້ຊອກເບິ່ງວ່າຢູ່ໃກ້ບ້ານມີສາຂາຫຼືສູນບໍລິການຂອງໄຟຟ້າໂຕກຽວບໍ່ແລ້ວຈຶ່ງຕິດຕໍ່ໄປ.

3) ເວລາຍ້າຍເຂົ້າໄປຢູ່ ໃຫ້ເປີດເບກເກີ (ສະວິດ) ຂຶ້ນ ແລ້ວກວດກາເບິ່ງວ່າໄຟຟ້າໃຊ້ໄດ້ບໍ່ (ດອກໄຟ, ແອ ແລະອື່ນໆໃຊ້ໄດ້ດີບໍ່)

4) ກວດເບິ່ງປະລິມານໄຟຟ້າ (ອຳແປ) ທີ່ທ່ານສາມາດໃຊ້ໄດ້.

5) ຖ້າໄຟຟ້າໃຊ້ບໍ່ໄດ້ໂດຍກະທັນຫັນ ໃຫ້ກວດກາເບິ່ງສະວິດໄຟກ່ອນ.

6) ກວດເບິ່ງວ່າສາຍໂທລະທັດແລະສາຍອິນເຕີເນັດໄດ້ແລ່ນໄວ້ບໍ່.

## 3 ລົງທະບຽນນຳໃຊ້ແກັດ

1) ກ່ອນຈະນຳໃຊ້ແກັດໄດ້ ຕ້ອງມີຄົນຈາກບໍລິສັດແກັດມາເຮັດວຽກຢູ່ເຮືອນຂອງທ່ານ. ສະນັ້ນ ຈົ່ງຕິດຕໍ່ຫາບໍລິສັດແກັດເພື່ອນັດວັນເວລາທີ່ເພິ່ນຈະສົ່ງຄົນລົງມາເຮັດວຽກ.

2) ເວລາພະນັກງານຈາກບໍລິສັດແກັດມາເຮັດວຽກ ທ່ານຫຼືຜູ້ໃດຜູ້ໜຶ່ງໃນຄອບຄົວຄວນຢູ່ບ້ານ.

3) ເວລາພະນັກງານມາເຮັດວຽກ ໃຫ້ທ່ານອ່ານຄູ່ມືການນຳໃຊ້ເຄື່ອງໃຊ້ແກັດທີ່ຖືກຕ້ອງ.

## 4 ລົງທະບຽນນຳໃຊ້ນ້ຳປະປາ

1) ກ່ອນຈະນຳໃຊ້ນ້ຳປະປາໄດ້ ຕ້ອງຕິດຕໍ່ລົງທະບຽນນຳສູນນ້ຳປະປາເສຍກ່ອນ. ຈົ່ງຖາມບໍລິສັດອະສັງຫາລິມະຊັບວ່າເຂົາເຈົ້າໄດ້ຕິດຕໍ່ໄປທາງນ້ຳປະປາໃຫ້ແລ້ວບໍ່.

2) ຫາກທ່ານຈະຕິດຕໍ່ເອງ ກໍໃຫ້ຊອກເບິ່ງວ່າຢູ່ໃກ້ບ້ານມີສູນນ້ຳປະປາຫຼືບໍ່ແລ້ວຈຶ່ງຕິດຕໍ່ໄປ.

3) ເວລາຍ້າຍເຂົ້າໄປຢູ່ ໃຫ້ກວດເບິ່ງວ່າກັອກນ້ຳມີນ້ຳຮົ່ວບໍ່, ໝໍ້ຕົ້ມນ້ຳໃຊ້ງານໄດ້ບໍ່, ນ້ຳຢູ່ອ່າງອາບນ້ຳໄຫຼດີບໍ່, ນ້ຳຢູ່ຫ້ອງນ້ຳຢຸດດີບໍ່, ມີການອຸດຕັນບໍ່.

## 5 ການນຳໃຊ້ໂທລະສັບຕັ້ງໂຕະ (ໃນກໍລະນີທີ່ຈຳເປັນ)

1) ຖ້າຢາກນຳໃຊ້ໂທລະສັບຕັ້ງໂຕະໃຫ້ໄປຕິດຕໍ່ນຳບໍລິສັດທີ່ໃຫ້ບໍລິການໂທລະສັບໃກ້ບ້ານທ່ານ.

# II ກົດລະບຽບແລະມາລະຍາດໃນເວລາຢູ່ອາໄສ

## 1 ຫຼັງຈາກຍ້າຍເຂົ້າໄປຢູ່

1) ເວລາເຫັນຄົນທີ່ຢູ່ໃກ້ຄຽງກັນ ຢູ່ທາງຍ່າງຫຼືຢູ່ລິບ ໃຫ້ທັກທາຍຖາມສະບາຍດີ ເຊັ່ນ "ກົນນິຈິວະ" (Kon-nichiwa)

## 2 ການເອົາຂີ້ເຫຍື້ອອອກ

1) ການເອົາຂີ້ເຫຍື້ອອອກຢູ່ຍີ່ປຸ່ນແມ່ນຈະຕ້ອງແບ່ງຕາມປະເພດຂີ້ເຫຍື້ອ. ການເອົາຂີ້ເຫຍື້ອອອກຈະແຕກຕ່າງກັນໄປຕາມແຕ່ລະເມືອງ, ເຂດແລະບ້ານ.
ຍ້ອນມີຄວາມແຕກຕ່າງຈາກປະເທດຂອງທ່ານ, ຈິ່ງສອບຖາມທາງຫ້ອງວ່າການເມືອງຫຼືເຂດກ່ຽວກັບວິທີການແຍກຂີ້ເຫຍື້ອ, ການເອົາຂີ້ເຫຍື້ອອອກແລະວັນທີ່ສາມາດເອົາອອກໄດ້.
2) ກົດລະບຽບໃນການເອົາຂີ້ເຫຍື້ອອອກອາດຈະມີຄວາມແຕກຕ່າງກັນໄປຕາມແຕ່ລະອາພາດເມັນແລະເຮືອນ ເພາະສະນັ້ນຄວນສອບຖາມນຳບໍລິສັດອະສັງຫາລິມະຊັບຫຼືຜູ້ເບິ່ງແຍງເຮືອນເຊົ່າ.
3) ໃນແຕ່ລະບ່ອນຈະມີບ່ອນມ້ຽນຂີ້ເຫຍື້ອສະເພາະເວລາເອົາຂີ້ເຫຍື້ອອອກ.
4) ຖ້າທ່ານຫຼົງເອົາຂີ້ເຫຍື້ອອອກ (ແຍກຂີ້ເຫຍື້ອຜິດປະເພດ, ເອົາອອກຜິດມື້, ຜິດບ່ອນ) ຂີ້ເຫຍື້ອຂອງທ່ານຈະບໍ່ຖືກເກັບໄປຖິ້ມ. ຫາກເອົາຂີ້ເຫຍື້ອອອກຜິດປະເພດ ທ່ານອາດຈະສ້າງບັນຫາລົບກວນຄົນຂ້າງຄຽງທີ່ຢູ່ໃນເຂດດຽວກັນ.

[ຕົວຢ່າງການເອົາຂີ້ເຫຍື້ອອອກ] (ຈະແຕກຕ່າງກັນໄປຕາມເຂດທີ່ທ່ານອາໄສຢູ່)

A ຂີ້ເຫຍື້ອພວກກະຕຸກນ້ຳ, ຢາງປະລາດສະຕິກ, ຂວດແກ້ວ, ກະປ໋ອງ ແມ່ນໃຫ້ແຍກຕາມແຕ່ລະຊະນິດແລ້ວເອົາໃສ່ຖົງຂີ້ເຫຍື້ອໃຫ້ຖືກປະເພດ (ຖ້າບໍ່ມີການກຳນົດປະເພດຖົງ ໃຫ້ເອົາໃສ່ຖົງຢາງໃສ). ຈິ່ງພະຍາຍາມຫຼຸດຜ່ອນປະລິມານຂີ້ເຫຍື້ອປຽກ.

B ຫາກທ່ານຫຼົງມື້ຫຼືເວລາເອົາຂີ້ເຫຍື້ອອອກ ຫຼືລືມເອົາອອກ, ໃຫ້ເກັບຂີ້ເຫຍື້ອໄວ້ໃນເຮືອນແລ້ວເອົາອອກໄປຖິ້ມໃນຄັ້ງຕໍ່ໄປ.

C ຂີ້ເຫຍື້ອຂະໜາດໃຫຍ່ແມ່ນຂີ້ເຫຍື້ອທີ່ມີຂະໜາດໃຫຍ່ເມື່ອທຽບກັບຂີ້ເຫຍື້ອປະເພດໂລຫະ, ຢາງປະລາດສະຕິກ, ໄມ້ແລະປະເພດແກ້ວອື່ນໆ.
ການເອົາຂີ້ເຫຍື້ອຂະໜາດໃຫຍ່ອອກຖິ້ມແມ່ນຕ້ອງໄດ້ຕິດຕໍ່ທາງຫ້ອງວ່າການເມືອງຫຼືບໍລິສັດທຳຄວາມສະອາດ ແລະຕ້ອງໄດ້ຈ່າຍຄ່າເກັບຂີ້ເຫຍື້ອຕ່າງຫາກ.

## 3 ກ່ຽວກັບສຽງລົບກວນ

1) ເວລາຫຼິ້ນເຄື່ອງດົນຕີ ຈິ່ງລະວັງສຽງທີ່ດັງເກີນຂອບເຂດ. ເວລາຈັດງານລ້ຽງ ກໍຈິ່ງລະວັງບໍ່ໃຫ້ສິ່ງສຽງແຊວຄືກັນກັບຢູ່ປະເທດຂອງຕົນເອງ. ໂດຍສະເພາະໃນຍາມກາງຄືນ ຈິ່ງຮັກສາຄວາມສະຫງົບ.
2) ຫາກຫ້ອງອື່ນມັກສິ່ງສຽງເນືອງນັນ ໃຫ້ປຶກສາກັບບໍລິສັດອະສັງຫາລິມະຊັບຫຼືເຈົ້າຂອງບ້ານ.

## 4 ຂໍ້ຫ້າມ ແລະ ກົດທີ່ຕ້ອງຮັກສາ

1) ຖ້າຈະລ້ຽງສັດ ໃຫ້ສອບຖາມທາງບໍລິສັດອະສັງຫາລິມະຊັບຫຼືເຈົ້າຂອງບ້ານເສຍກ່ອນວ່າລ້ຽງໄດ້ບໍ່. ການເອົາສັດມາລ້ຽງໂດຍບໍ່ໄດ້ຮັບອະນຸຍາດ ຖືເປັນການລະເມີດສັນຍາເຊົ່າ.
2) ບໍ່ຄວນເຈາະຮູ ຫຼືຕອກຕະປູໃສ່ຝາຫ້ອງຫຼືເສົາ.

3) ທາງຍ່າງ, ຂັ້ນໃດແລະສະຖານທີ່ສ່ວນລວມໃນເຮືອນເຊົ່າຫຼືອາພາດເມັນ ເປັນທາງໜີໄພເວລາເກີດແຜ່ນດິນໄຫວຫຼືໄຟໄໝ້. ເພາະສະນັ້ນ ທ່ານບໍ່ຄວນວາງຂີ້ເຫຍື້ອ, ກະຖາງຕົ້ນໄມ້, ລົດຖີບແລະສິ່ງຂອງອື່ນໆໄວ້ ບໍ່ດັ່ງນັ້ນ ຈະຖືກຕັກເຕືອນຈາກ ສະຖານີດັບເພີງ.

4) ບໍ່ຄວນວາງເຄື່ອງຂອງໄວ້ຢູ່ລະບຽງບ້ານທີ່ສາມາດໃຊ້ເປັນທາງໜີໄພໄດ້.

5) ຫ້າມບຸກຄົນອື່ນທີ່ບໍ່ຢູ່ໃນລາຍຊື່ ທີ່ແຈ້ງຕໍ່ບໍລິສັດອະສັງຫາລິມະຊັບໃນເວລາເຮັດສັນຍາເຊົ່າເຂົ້າມາຢູ່.

6) ຄ່າເຊົ່າແລະບັນດາຄ່າໃຊ້ຈ່າຍອື່ນໆ ຕ້ອງຈ່າຍພາຍໃນວັນເວລາທີ່ກຳນົດໄວ້.

* ເພື່ອໃຊ້ຊີວິດຢູ່ຍີ່ປຸ່ນໄດ້ຢ່າງສະບາຍໃຈ ຈົ່ງຮັກສາກົດລະບຽບແລະມາລະຍາດຂອງຍີ່ປຸ່ນ. ຖ້າມີຈຸດໃດບໍ່ເຂົ້າໃຈ ໃຫ້ຖາມຄົນອ້ອມຂ້າງຂອງທ່ານ.

## III ເວລາຈະຍ້າຍອອກຈາກເຮືອນທີ່ເຊົ່າຢູ່

### 1 ແຈ້ງເລື່ອງການຍົກຍ້າຍ

1) ກ່ອນຈະຍ້າຍອອກ ໃຫ້ແຈ້ງຕໍ່ເຈົ້າຂອງບ້ານຫຼືບໍລິສັດອະສັງຫາລິມະຊັບພາຍໃນເວລາທີ່ກຳນົດໄວ້ໃນສັນຍາ (ປະມານ 1 ຫາ 2 ເດືອນ ກ່ອນຍ້າຍອອກ)

### 2 ແຈ້ງໄຟຟ້າ, ແກັດ, ນ້ຳປະປາ

1) ໃຫ້ແຈ້ງ ບໍລິສັດໄຟຟ້າໂຕກຽວ, ບໍລິສັດແກັດ, ສູນນ້ຳປະປາ ຢ່າງໜ້ອຍ 1 ອາທິດກ່ອນຍ້າຍອອກ.

2) ໃນມື້ທີ່ທ່ານຍ້າຍອອກ ຈະມີພະນັກງານຈາກແຕ່ລະພາກສ່ວນແລະບໍລິສັດມາລົບລ້າງການນຳໃຊ້ໄຟຟ້າ, ແກັດ ແລະນ້ຳປະປາ. ເວລານັ້ນໃຫ້ທ່ານສອບຖາມການຊຳລະເງິນຄ່ານຳໃຊ້ຈົນຮອດມື້ນັ້ນ.

### 3 ແຈ້ງຍົກເລີກໂທລະສັບ, ອິນເຕີເນັດ ແລະໄປສະນີ

1) ຖ້າແມ່ນໂທລະສັບຕັ້ງໂຕະ, ເວລາຈະຍ້າຍ ໃຫ້ທ່ານ ແຈ້ງບໍລິສັດໂທລະຄົມທີ່ທ່ານເຮັດສັນຍານຳ.

2) ຖ້າເປັນໂທລະສັບມືຖື ໃຫ້ທ່ານແຈ້ງທີ່ຢູ່ໃໝ່ໃຫ້ທາງບໍລິສັດທີ່ໃຫ້ບໍລິການຮັບຮູ້.

3) ສ່ວນອິນເຕີເນັດ ໃຫ້ທ່ານແຈ້ງບໍລິສັດທີ່ໃຫ້ບໍລິການອິນເຕີເນັດກ່ຽວກັບການຍົກຍ້າຍ.

4) ແຈ້ງທີ່ຢູ່ໃໝ່ໃຫ້ຫ້ອງການໄປສະນີຮັບຮູ້.

### 4 ຕິດຕໍ່ເກັບຂີ້ເຫຍື້ອຂະໜາດໃຫຍ່

1) ເວລາມີເຟີນີເຈີທີ່ຈະຖິ້ມ, ມີຂີ້ເຫຍື້ອຂະໜາດໃຫຍ່ຫຼືມີຂີ້ເຫຍື້ອຫຼາຍ ໃຫ້ຕິດຕໍ່ຫາຫ້ອງວ່າການເມືອງຫຼືບໍລິສັດທຳຄວາມສະອາດໂດຍໄວເພື່ອສອບຖາມລາຍລະອຽດໃນການເອົາຂີ້ເຫຍື້ອອອກ.

2) ໃນກໍລະນີທີ່ ມື້ເກັບຂີ້ເຫຍື້ອຂະໜາດໃຫຍ່ ເປັນມື້ຫຼັງຈາກຍ້າຍອອກແລ້ວ ໃຫ້ທ່ານປຶກສານຳເຈົ້າຂອງເຮືອນຫຼືຄົນເບິ່ງແຍງ.

### 5 ການຍ້າຍເຄື່ອງອອກ

1) ການຍ້າຍເຮືອນ ຄວນເຮັດໃນເວລາກາງເວັນ. ບໍ່ຄວນຍ້າຍເຄື່ອງໃນຍາມກາງຄືນ ເພາະຈະເປັນການລົບກວນຄົນໃກ້ຄຽງ.

2) ຫຼັງຈາກຍ້າຍເຄື່ອງອອກຈາກຫ້ອງໝົດແລ້ວ ໃຫ້ທຳຄວາມສະອາດຫ້ອງ ບໍ່ໃຫ້ມີຂີ້ເຫຍື້ອຕົກຄ້າງ.

**6 ເວລາອອກຈາກເຮືອນ**

1) ສົ່ງກະແຈຄືນໃຫ້ບໍລິສັດອະສັງຫາລິມະຊັບ.
2) ກວດກາສະພາບຫ້ອງພ້ອມກັບບໍລິສັດອະສັງຫາລິມະຊັບຫຼືເຈົ້າຂອງເຮືອນ ເພື່ອຢັ້ງຢືນ ແລະສົມທຽບ ນຳກັນກັບເວລາຍ້າຍເຂົ້າໄປຢູ່ໃໝ່ວ່າທ່ານໄດ້ແປງຫ້ອງໃຫ້ກັບຄືນສູ່ສະພາບເດີມໄດ້ຫຼາຍປານໃດ.

* ການແປງຫ້ອງໃຫ້ກັບຄືນສູ່ສະພາບເດີມແມ່ນການແປງບ່ອນທີ່ເປ່ເພເສຍຫາຍຫຼືຂູດຂີດ.

**7 ການຄິດໄລ່ເງິນມັດຈຳ**

1) ຫຼັງຈາກຍ້າຍອອກແລ້ວ ປົກກະຕິທາງເຈົ້າຂອງເຮືອນຕ້ອງສົ່ງເງິນມັດຈຳຄືນໃຫ້ທ່ານ. ແຕ່ຖ້າຕ້ອງມີການແປງຫ້ອງຄືນໃໝ່ຫຼືຕ້ອງມ້ຽນສິ່ງຂອງທີ່ຕົກຄ້າງຢູ່ ແມ່ນທາງເຈົ້າຂອງເຮືອນຈະຫັກຄ່າໃຊ້ຈ່າຍນັ້ນຈາກເງິນມັດຈຳ.
2) ຫາກຄ່າໃຊ້ຈ່າຍດັ່ງກ່າວຫຼາຍກວ່າເງິນມັດຈຳ ທ່ານຕ້ອງໄດ້ເສຍເງິນເພີ່ມເພື່ອແປງຫ້ອງໃຫ້ກັບສູ່ສະພາບເດີມ.

---

ປຶ້ມຄູ່ມືນີ້ແປມາຈາກຄູ່ມືສະບັບພາສາຍີ່ປຸ່ນທີ່ຂຽນຂຶ້ນໃນເດືອນ 3 ປີ 2012 (ໂດຍສູນຊ່ວຍເຫຼືອຄົນຕ່າງດ້າວໃນການເຊົ່າເຮືອນຢູ່ຄານາງະວະທີ່ໄດ້ຮັບມອບໝາຍຈາກແຂວງຄານາງະວະ)

ພະແນກຕ່າງປະເທດ ສູນພົນລະເມືອງ ແຂວງຄານາງະວະ
1 ນິຮົງໂອໂດຣິ ເຂດ ນາກະ ຄຸ ເມືອງໂຢໂກຮາມະ
ໂທ: 045-210-1111 (ຕໍ່ 3748)
ແຟັກ: 045-212-2753